**ອາທິດໃບລານ**

**ວັນທີ 14 ເມສາ 2019**



**ພຣະວໍລະສານໂດຍນັກບຸນລູກາ 19, 28-40**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດນຳໜ້າຂຶ້ນໄປນະຄອນເຢລູຊາແລມ. ພໍຈະເຖິງບ້ານເບັດຟາເຢແລະເບທານີໃກ້ພູທີ່ຊື່ວ່າພູໝາກກອກ. ພຣະອົງແຕ່ງສາວົກສອງຄົນໄປກ່ອນແລະສັ່ງວ່າ: ຈົ່ງໄປບ້ານທີ່ຢູ່ໜ້າພຸ້ນ, ເມື່ອໄປເຖິງແລ້ວພວກເຈົ້າຈະເຫັນລູກລາຕົວໜຶ່ງລ່າມຢູ່, ຍັງບໍ່ທັນມີໃຜຂຶ້ນຂີ່ເລີຍ ຈົ່ງແກ້ເອົາແລະຈູງມາໃຫ້ເຮົາ. ຖ້າມີໃຜຖາມວ່າ: ເປັນຫຍັງຈຶ່ງແກ້ມັນ ກໍໃຫ້ຕອບວ່າພຣະອົງເຈົ້າຕ້ອງການ.

ສາວົກທັງສອງໄດ້ໄປແລະພົບເຫັນທຸກຢ່າງຕາມທີ່ພຣະອົງໄດ້ບອກໄວ້. ເມື່ອພວກເຂົາແກ້ເຊືອກລາອອກ, ເຈົ້າຂອງກໍຮ້ອງຖາມວ່າ: ພວກເຈົ້າແກ້ເອົາລູກລານີ້ໄປເຮັດຫຍັງ? ພວກສາວົກຕອບວ່າ: ພຣະອົງເຈົ້າຕ້ອງການ. ແລ້ວກໍຈູງລາມາຫາພຣະເຢຊູເຈົ້າ. ພວກເຂົາເອົາເສື້ອຕຸ້ມປູຫລັງລາ ແລ້ວເຊີນພຣະອົງຂຶ້ນປະທັບນັ່ງ. ໃນເວລາພຣະອົງສະເດັດໄປນັ້ນປະຊາຊົນກໍພາກັນແກ້ເສື້ອຕຸ້ມຂອງຕົນອອກມາປູລາດໄປຕາມທາງ.

ເມື່ອຈະລົງຈາກພູໝາກກອກ, ບັນດາພວກລູກສິດມີຄວາມຊື່ນຊົມຍິນດີໂຮຮ້ອງສັນລະເສີນພຣະເປັນເຈົ້າ ຍ້ອນອັດສະຈັນຕ່າງໆທີ່ໄດ້ເຫັນ. ພວກເຂົາເວົ້າວ່າ : ຂໍພຣະມະຫາກະສັດຜູ້ສະເດັດມາໃນນາມຂອງພຣະອົງເຈົ້າຈົ່ງຊົງພຣະຈະເລີນ! ສັນຕິສຸກຈົ່ງມີໃນສະຫວັນແລະພຣະກຽດມຸງຄຸນໃນທີ່ສູງສຸດ.

ພວກຟາຣິເຊວລາງຄົນທີ່ຢູ່ໃນຝູງຊົນທູນພຣະອົງວ່າ: ພຣະອາຈານ, ໂຜດສັ່ງໃຫ້ພວກສາວົກຂອງທ່ານມິດແດ່. ພຣະເຢຊູເຈົ້າກ່າວຕອບວ່າ: ເຮົາຂໍບອກພວກເຈົ້າວ່າ ຖ້າຄົນເຫລົ່ານີ້ມິດແລ້ວ, ກ້ອນຫີນຈະຮ້ອງຂຶ້ນແທນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 19, 28-40**

ພວກເຮົາພ້ອມກັບພຣະເຢຊູເຈົ້າເຂົ້າໃນທີ່ປ່ງວຕະຫລອດເວລາ 40 ວັນ ເພື່ອບຳເພັນພາວະນາພາຍໃຕ້ການນຳພາຂອງພຣະຈິດເຈົ້າຢ່າງໃດ, ວັນອາທິດໃບລານນີ້ພວກເຮົາກໍຂຶ້ນໄປນະຄອນເຢລູຊາແລມພ້ອມກັບພຣະເຢຊູເຈົ້າເພື່ອເຂົ້າສູ່ມະຫາທໍລະມານ, ຕາຍຢ່າງນັ້ນ. ເພື່ອພວກເຮົາຈະໄດ້ກັບເປັນຄືນມາພ້ອມກັບພຣະອົງໃນວັນປາສກາ. ເພາະສະນັ້ນ, ອາທິດໃບລານຈຶ່ງເປັນອາທິດທີ່ຕຽມພວກເຮົາເຂົ້າສູ່ອາທິດມະຫາທໍລະມານຂອງພຣະເຢຊູເຈົ້າເພື່ອມຸ່ງສູ່ວັນປາສກາ.

ກ່ອນທີ່ພຣະເຢຊູເຈົ້າຈະຮັບທົນທໍລະມານ, ວາຈາພຣະເຈົ້າວັນນີ້ສະທ້ອນໃຫ້ພວກເຮົາເຫັນເຖິງຄວາມສະໜິດສຳພັນລະຫວ່າງພຣະເຢຊູເຈົ້າກັບພວກລູກສິດຂອງພຣະອົງ. ສ່ວນພວກລູກສິດອາດຈະບໍ່ເຂົ້າໃຈເຖິງສິ່ງທີ່ຈະເປັນມາກັບພຣະເຢຊູເຈົ້າ. ເພາະພວກເຂົາໂຮຮ້ອງສັນລະເສີນພຣະເປັນເຈົ້າຍ້ອນສິ່ງມະຫັດສະຈັນທີ່ພວກເຂົາເຫັນ. ແລະຍ້ອນພວກເຂົາຄິດວ່າພຣະເຢຊູເຈົ້າຈະມາເປັນກະສັດເພື່ອປົດປ່ອຍພວກເຂົາອອກຈາກຄວາມຫຍຸ້ງຍາກດ້ານການເມືອງກໍຄືດ້ານເສດຖະກິດ. ສິ່ງທີ່ພວກລູກສິດຄາດຫວັງກັບພຣະເຢຊູເຈົ້າໃນເວລານີ້ ພວກເຂົາຈະຜິດຫວັງເມື່ອເຫັນພຣະເຢຊູເຈົ້າຖືກຈັບ, ທົນທໍລະມານແລະຕາຍ.

ສ່ວນພຣະເຢຊູເຈົ້າ, ພຣະອົງຮູ້ເຫັນສິ່ງທີ່ຈະເປັນມາ. ສິ່ງນີ້ສະທ້ອນໃຫ້ພວກເຮົາເຫັນຜ່ານທາງຄຳເວົ້າຂອງພຣະອົງທີ່ສັ່ງພວກລູກສິດໃຫ້ໄປກະທຳ ແລະສິ່ງທີ່ພຣະເຢຊູເຈົ້າກ່າວມານັ້ນກໍໄດ້ເປັນຈິງດັ່ງທີ່ພວກລູກສິດເຫັນ. ໝາຍວ່າພຣະເຢຊູເຈົ້າໄດ້ຕຽມພ້ອມທີ່ຈະຜ່ານຄວາມທໍລະມານ, ຕາຍເພື່ອໄຖ່ບາບພວກເຮົາ. ຕໍ່ໜ້າເຫດການທີ່ຈະເປັນມາ, ແທນທີ່ພຣະເຢຊູເຈົ້າຈະມີຄວາມສັບສົນລະວົນ, ພຣະອົງພັດຢູ່ໃນຄວາມສະຫງົບແລະມຸ່ງສູ່ເຢລູຊາແລມດ້ວຍຄວາມສະໝັກໃຈ.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້, ຊ່ວຍພວກເຮົາໃຫ້ກະກຽມຈິດໃຈເພື່ອເຂົ້າສູ່ອາທິດສັກສິດພ້ອມກັບພຣະເຢຊູເຈົ້າກ່ອນວັນປາສກາທີ່ຈະມາເຖິງ. ເພາະຖ້າພວກເຮົາຮ່ວມທຸກນຳພຣະອົງ, ນຳພຣະອົງພວກເຮົາຈະຊື່ນຍິນດີ. ແລະຖ້າພວກເຮົາຕາຍຮ່ວມກັບພຣະອົງ, ນຳພຣະອົງພວກເຮົາຈະມີຊີວິດ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ